ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------- 6166

ກະຊວງສາທາລະນະສຸກ

ກົມອາຫານແລະຢາ

ໂທ: 214013-4 ແຟັກ: 214015, 213495

ເລກທີ ............../13.ກອຢ

ວັນທີ 09 AUG 2013

## ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫົວໜ້າອຳນວຍການໂຮງໝໍສູນກາງ,ແຂວງ,ເມືອງ,ບໍລິສັດ, ຫ້າງຮ້ານ ແລະ ພໍ່ແມ່ປະຊາຊົນ ໃນທົ່ວປະເທດ

ເລື້ອງ: ຫ້າມບໍລິໂພກ ແລະ ຈຳໜ່າຍຜະລິດຕະພັນນົມດູເມັກ ທີ່ສົງໃສມີການປົນເປື້ອນເຊື້ອພະຍາດ.

- ອີງຕາມ : ກົດໝາຍວ່າດ້ວຍອາຫານ 2004, ມາດຕາ 14,22 ແລະ 24 ວ່າດ້ວຍອາຫານປອດໄພ, ການຈຳໜ່າຍ ແລະການນຳເຂົ້າອາຫານ;
- ອີງຕາມ : ການສັງລວມຂໍ້ມູນ ແລະ ການລົງກວດກາຕົວຈິງ ຂອງກົມອາຫານແລະຢາ ແລະ ກອງກວດກາອາຫານແລະຢາ;
- ອີງຕາມ: ການຊີ້ນຳຂອງທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ຄັ້ງວັນທີ 8 ສິງຫາ 2013.

ພາຍຫຼັງທີ່ໄດ້ຮັບຂໍ້ມູນຈາກແຫຼ່ງຂ່າວທັງພາຍໃນ ແລະຕ່າງປະເທດກ່ຽວກັບນົມຜົງເດັກນ້ອຍທີ່ສົງໃສປົນເປື້ອນດ້ວຍເຊື້ອພະຍາດ Clostridium butalinum (ສາຍພັນ Infantile botulism)ແລະ ການລົງກວດກາຕິດຕາມການຈຳໜ່າຍຜະລິດຕະພັນນົມຜົງດັ່ງກ່າວ, ກົມອາຫານແລະຢາ, ກະຊວງສາທາລະນະສຸກ ຂໍແຈ້ງມາຍັງທ່ານ ກ່ຽວກັບຫ້າມນຳເຂົ້າ, ຈຳໜ່າຍ ແລະບໍລິໂພກ ຜະລິດຕະພັນນົມດູເມັກ ທີ່ສົງໃສມີການປົນເປື້ອນຈາກເຊື້ອພະຍາດ ດັ່ງມີລາຍລະອຽດດັ່ງລຸ່ມນີ້:

**1. ລາຍລະອຽດຜະລິດຕະພັນທີ່ສົງໃສມີການປົນເປື້ອນເຊື້ອພະຍາດ**

| ຊື່ຜະລິດຕະພັນນົມ | ວັນຜະລິດ | ວັນໝົດອາຍຸ |
|---|---|---|
| ດູໂປຣ ສູດ 2(Dupro step 2) | 29/4/2013 ຫາ 28/6/2013 | 29/10/2014 ຫາ 28/12/2014 |
| ໄຮຄິວ ສູດ 1 (Hi-Q step 1 ) | 09/5/2013 ຫາ 15/7/2013 | 09/11/2014 ຫາ 15/1/2015 |
| ໄຮຄິວ ສູດ 2 (Hi-Q step 2 ) | 29/4/2013 ຫາ 25/6/2013 | 29/10/2014 ຫາ 25/12/2014 |
| ໄຮຄິວ ຊຸບເປີ ໂກນ ສູດ 1(Hi-Q super gold step 1 ) | 11/5/2013 ຫາ 14/6/2013 | 11/11/2014 ຫາ 14/12/2014 |
| ໄຮຄິວ ຊຸບເປີ ໂກນ ສູດ 2 (Hi-Q super gold step 2) | 11/5/2013 ຫາ 28/6/2013 | 11/11/2014 ຫາ 28/12/2014 |

ນອກຈາກນັ້ນ, ຍັງມີການລາຍງານການເກັບຄືນຜະລິດຕະພັນນົມຍີ່ຫໍ້ ຊີມີແລັກ ແກນປລັສ ໄອຄິວ ສູດ 3 (Similac Gain Plus eye-Q 3) ຂອງບໍລິສັດ ອາ ບອັດ(Abbort) 11 ຊຸດຜະລິດ ສໍາລັບ ເດັກ ອາຍຸ 1-3 ປີ ຂະໜາດ 900 ມີລີກຣາມ/ປອງ ແລະ 400 ມີລີກຣາມ/ປອງ ກໍມີການປົນເປື້ອນເຊັ່ນກັນ.

ອາການຂອງເດັກທີ່ໄດ້ຮັບເຊື້ອພະຍາດ Clostridium butalinum: ເວລາສະແດງອາການ 3-30 ວັນ ເລີ້ມດ້ວຍການຍື່ງທ້ອງ (ບໍ່ຖ່າຍ 3 ມື້ຂື້ນໄປ), ບໍ່ດູດນົມ, ແຂນຂາລ່ອຍ, ຄໍເຕື່ອຍຍໍຄໍບໍ່ໄດ້, ໜັງຕາຍານ, ແກ້ວຕາຂະຫຍາຍ, ໃຫ້ບໍ່ອອກສຽງ ຈົນເຖິງບໍ່ຫາຍໃຈ ອາການຈະເປັນຫຼາຍຂື້ນໃນ ໃລຍະ 1 ຫາ 2 ອາທິດ. ຖ້າມີອາການດັ່ງກ່າວຄວນພາເດັກໄປພົບແພດ.

2. **ມາດຕະການ**

- ຜ່ານມາກົມອາຫານແລະຢາໄດ້ລົງກວດກາຕິດຕາມການຈໍາໜ່າຍ ແລະການເຂົ້າຜະລິດຕະພັນດັ່ງກ່າວ ແລະໄດ້ຮັບການຮ່ວມມືຈາກບໍລິສັດຂວັນໃຈການຄ້າທີ່ເປັນບໍລິສັດຈໍາໜ່າຍນົມຜົງດູເມັກ ແລະເຫັນວ່າໄດ້ເກັບອາຍັດຜະລິດຕະພັນທີ່ມີການສົງໃສໄວ້ແລ້ວ 8,7 ໂຕນ ແລະ ເພື່ອໃຫ້ມີການກວດກາທົ່ວເຖິງ ແລະຮັບປະກັນໃຫ້ຜະລິດຕະພັນນົມທີ່ບໍ່ປອດໄພນັ້ນຄົງຄ້າງຈື່ງສະເໜີພະແນກສາທາລະນະສຸກແຂວງ, ນະຄອນ ແລະ ເມືອງເອົາໃຈໃສ່ປະຕິບັດຄື:
- ລົງກວດກາຕິດຕາມຮ້າຍຈໍາໜ່າຍຜະລິດຕະພັນນົມ ແລະຍຶດອາຍັດຜະລິດຕະພັນນົມທີ່ມີການປົນເປື້ອນ
- ເຄັ່ງຄັດກວດກາ ການນໍາເຂົ້ານົມ ແລະ ຜະລິດຕະພັນນົມ ແລະ ຫ້າມການນໍາເຂົ້າຜະລິດຕະພັນນົມທີ່ມີການປົນເປື້ອນດັ່ງກ່າວທີ່ໄດ້ແຈ້ງໃນຕາຕະລາງຂ້າງເທິງ.
- ລາຍງານຜົນຂອງການກວດກາໃຫ້ກົມອາຫານແລະຢາຮັບຊາບ ເພື່ອລາຍງານຕໍ່ຂັ້ນເທິງ

3. **ຂໍ້ຮຽກຮ້ອງ**

-ຮຽກຮ້ອງມາຍັງບໍລິສັດນໍາເຂົ້ານົມ ແລະ ຜະລິດຕະພັນນົມ ສໍາລັບເດັກນ້ອຍຕ້ອງຂໍອະນຸຍາດການນໍາເຂົ້າຈາກ ກົມອາຫານແລະຢາ ແລະ ລາຍງານກ່ຽວກັບການຄອບຄອງນົມທີ່ສົງໃສມີການປົນເປື້ອນ ໃຫ້ກົມອາຫານແລະຢາເພື່ອລາຍງານໃຫ້ການນໍາກະຊວງສາທາລະນະສຸກ;

- ຮຽກຮ້ອງໃຫ້ອົງການຈັດຕັ້ງຂອງລັດໃຫ້ຄວາມຮ່ວມມືໃນການຕິດຕາມກວດກາການຈໍາໜ່າຍ ແລະ ນໍາເຂົ້າຜະລິດຕະພັນນົມ ຫຼື ອາຫານອື່ນໆ ທີ່ມີຄວາມສ່ຽງຕາມພາລະບົດບາດຂອງຕົນ ແລະມີການປະສານງານທີ່ດີ;

- ຮຽກຮ້ອງໃຫ້ຜູ້ບໍລິໂພກມີສະຕິໃນການເລືອກຊື້ ແລະ ບໍລິໂພກຜະລິດຕະພັນນົມດ້ວຍການສັງເກດວັນເດືອນປີ ຜະລິດ ແລະ ວັນເດືອນປີ ໝົດອາຍຸຕາມທີ່ໄດ້ແຈ້ງໄວ້. ໃນກໍລະນີສົງໃສໃຫ້ແຈ້ງ ຫຼື ຕິດຕໍ່ກົມອາຫານແລະຢາ, ກະຊວງສາທາລະນະສຸກ ໂທ: 214013-14; ແຟັກ : 214015 ແລະ ອີແມວ: codexcontactpoint_lao@yahoo.com

ດັ່ງນັ້ນ, ຈື່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າກົມອາຫານແລະຢາ

ດຣ. ສົມທະວີ ຈາງວິສົມມິດ